Employment Development Department
State of California

ຊື່ຫ້ອງການ EDD
ຕູ້ ປ. ນ.
ເມືອງ ລັດຄາລິຟໍເນຍ (CA) ລະຫັດໄປສະນີ

**ເບີໂທລະສັບ EDD:**

| | |
|---|---|
| ພາສາອັງກິດ: | 1-800-300-5616 |
| ພາສາສະເປນ: | 1-800-326-8937 |
| ພາສາຄັນໂຕນີສ: | 1-800-547-3506 |
| ພາສາແມນດາຣິນ: | 1-866-303-0706 |
| ພາສາຫວຽດນາມ: | 1-800-547-2058 |
| TTY: (ບໍ່ມີສຽງ) | 1-800-815-9387 |

ວັນທີສົ່ງ:
ເລກປະກັນສັງຄົມ:

ຊື່ ແລະ ທີ່ຢູ່ຂອງຜູ້ຮ້ອງຮຽນ

ຊື່ຜູ້ຮ້ອງຮຽນ
ທີ່ຢູ່ທາງໄປສະນີຂອງຜູ້ຮ້ອງຮຽນ
ເມືອງຂອງຜູ້ຮ້ອງຮຽນ, ລັດ, ລະຫັດໄປສະນີ

ຕົວຢ່າງ

# ແຈ້ງການເລື່ອງການສຳພາດການມີສິດໄດ້ຮັບເງິນຊ່ວຍເຫຼືອຈາກປະກັນໄພຫວ່າງງານ

ການຂໍໃຫ້ມີການກຳນົດເວລາການສຳພາດທາງໂທລະສັບຄືນໃໝ່ແມ່ນຈະສົ່ງຜົນໃຫ້ເປັນວັນທີພາຍຫຼັງ ແລະ ຈະຂຶ້ນກັບເວລາຫວ່າງຂອງການນັດສຳພາດນຳ. ເຫດຜົນທີ່ທ່ານບໍ່ຫວ່າງສຳພາດທາງໂທລະສັບຕາມທີ່ກຳນົດເບື້ອງຕົ້ນອາດຈະມີຜົນຕໍ່ການມີສິດໄດ້ຮັບການຈ່າຍເງິນຊ່ວຍເຫຼືອຂອງທ່ານນຳ. ເງິນຊ່ວຍເຫຼືອປະກັນໄພການຫວ່າງງານ (UI) ແມ່ນບໍ່ສາມາດຈ່າຍໃຫ້ໄດ້ ຈົນກວ່າຈະສຳເລັດການສຳພາດທາງໂທລະສັບກັບທ່ານ, ການມີສິດໄດ້ຮັບຂອງທ່ານໄດ້ຮັບການກຳນົດ, ແລະ ໄດ້ຮັບການຢັ້ງຢືນໃຫ້ສືບຕໍ່ຈ່າຍເງິນຊ່ວຍເຫຼືອໃຫ້ແກ່ທ່ານ.

ຖ້າທ່ານບໍ່ຫວ່າງໃຫ້ສຳພາດທາງໂທລະສັບ ແລະ ບໍ່ໄດ້ຂໍໃຫ້ທາງຫ້ອງການ EDD ກຳນົດເວລາການສຳພາດທາງໂທລະສັບຄືນໃໝ່ ແລະ/ຫຼື ບໍ່ໄດ້ບອກເບີໂທລະສັບເບີອື່ນໄວ້, ການຕັດສິນແມ່ນຈະຕັດສິນຕາມຂໍ້ມູນທີ່ມີຢູ່. **ອັນນີ້ອາດຈະສົ່ງຜົນໃຫ້ມີການປະຕິເສດເງິນຊ່ວຍເຫຼືອໄດ້. ນອກຈາກນັ້ນ, ຖ້າຫ້ອງການ EDD ກຳນົດວ່າ ທ່ານໄດ້ຮັບການຈ່າຍເງິນຊ່ວຍເຫຼືອ UI ທີ່ທ່ານບໍ່ມີສິດໄດ້ຮັບ ເນື່ອງຈາກມີການລາຍງານຜິດ ຫຼື ມີການກັກຂໍ້ມູນໄວ້ນັ້ນໄປແລ້ວ, ທ່ານຈະຕ້ອງໄດ້ຈ່າຍເງິນຊ່ວຍເຫຼືອທີ່ທ່ານໄດ້ຮັບໄປນັ້ນຄືນໃຫ້ກັບ EDD.**

ເພື່ອທີ່ຈະຕິດຕໍ່ກັບຫ້ອງການ EDD ກ່ຽວກັບການກຳນົດເວລາການສຳພາດທາງໂທລະສັບຄືນໃໝ່, ທ່ານອາດຈະເຂົ້າໄປເບິ່ງ UI Online℠ ໄດ້ຢູ່ທີ່ **www.edd.ca.gov/UI_Online** ຫຼື ຕິດຕໍ່ຫາຫ້ອງການ EDD ດ້ວຍການໂທຟຣີຕາມເບີທີ່ບອກໄວ້ຢູ່ຂ້າງເທິງ.

**ທ່ານມີສິດ:**

- ຂໍເວລາເພີ່ມ ເພື່ອກຽມຕົວສຳພາດທາງໂທລະສັບ. ກະລຸນາຮັບຮູ້ວ່າ ການກຳນົດເວລາການສຳພາດທາງໂທລະສັບຄືນໃໝ່ອາດຈະມີຜົນເຮັດໃຫ້ເກີດການຊັກຊ້າເວລາຫຼາຍໃນການໄດ້ຮັບການຈ່າຍເງິນຊ່ວຍເຫຼືອໄດ້.
- ສະແດງພະຍານທີ່ຈຳເປັນໃນລະຫວ່າງການສຳພາດ ແລະ ໃຫ້ຫຼັກຖານສະແດງແກ່ຜູ້ສຳພາດ.
- ໃຫ້ຜູ້ໃດຜູ້ໜຶ່ງເປັນຕົວແທນໃຫ້ໃນລະຫວ່າງການສຳພາດດ້ວຍຄ່າໃຊ້ຈ່າຍຂອງທ່ານເອງ.

ອີງຕາມກົດໝາຍແລ້ວ, ຈະໄດ້ມີການຕິດຕໍ່ກັບນາຍຈ້າງ ຖ້າຫາກວ່າມີຄວາມຈຳເປັນ ເພື່ອກວດສອບຄວາມຖືກຕ້ອງ ຫຼື ຂໍເອົາຂໍ້ເທັດຈິງທີ່ກ່ຽວຂ້ອງ.
**ສິ່ງສຳຄັນ:** ເພື່ອເລັ່ງໃຫ້ຂະບວນການສຳພາດທາງໂທລະສັບໄວຂຶ້ນ, ກະລຸນາອ່ານຄຳແນະນຳການສຳພາດ ເຊິ່ງມີຢູ່ດ້ານຫຼັງຂອງແບບຟອມ ແລະ ມີທຸກຂໍ້ມູນກ່ຽວຂ້ອງພ້ອມໃຫ້ສຳລັບການສຳພາດທາງໂທລະສັບ.

## ຄຳແນະນຳການສຳພາດທາງໂທລະສັບ

ໃນລະຫວ່າງການສຳພາດ ທ່ານອາດຈະຖືກຖາມບາງຄຳຖາມຕໍ່ໄປນີ້ຄື:

**ໝາຍເຫດ:** ຄຳຖາມຈະຂຶ້ນກັບເຫດຜົນທີ່ທ່ານກຳນົດເວລາສຳພາດທາງໂທລະສັບໄວ້.

ຕົວຢ່າງ